## ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກຜັກບົ່ວ

(ສະບັບທົດລອງ)



ຂຽນໂດຍ: ນາງ ຈັນສະຫງວນ ສະຫວັດ
ຂໍ້ມູນຈາກ: ບ້ານ ທ່ານາ ເມືອງ ໄຊຍະບູລີ

2007

PDF created with pdfFactory Pro trial version www.pdffactory.com

## ຮູບ ແລະ ປະຫວັດຂອງຜູ້ຂຽນ

ນາງ ວັນສະຫງວນ ສະຫວັດ

ອາຍຸ................, ອາຊີບ...............

**ເຫດຜົນທີ່ຂຽນຫົວຂໍ້ນີ້:**

PDF created with pdfFactory Pro trial version www.pdffactory.com

## ບົດເລກ

ຫົວຜັກບົ່ວ 7 ສຸມໄດ້ 1 ກິໂລ ປ້າສີຫຼົກຫົວຜັກບົ່ວໄດ້ 35 ສຸມ ມາ ຂາຍ ກິໂລລະ 5.000 ກີບ ຖາມວ່າປ້າສີຫຼົກຫົວຜັກບົ່ວໄດ້ຈັກກິໂລ? ຂາຍໄດ້ເງິນເທົ່າໃດ?

**ເກມ**:ເວົ້າຕໍ່ໆ

ໃຫ້ນັກຮຽນ 16 ຄົນເຮັດເປັນສອງແຖວແລ້ວໃຫ້ຜູ້ຢູ່ຫົວແຖວອອກມາອ່ານຄຳທີ່ເພິ່ນຂຽນໄວ້ແລ້ວໄປຊື່ມໃສ່ຕໍ່ໆກັນໄປແລ້ວໃຫ້ຜູ້ສຸດທ້າຍອອກໄປຂຽນ

ຕົວຢ່າງ:

- ຜັກບົ່ວຫົວໃຫຍ່ໃສ່ຕົມແຈ່ວປາຕື່ນເຊົ້າມາເຮົາໄປຫົດນ້ຳ

# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກຜັກບົ່ວ


ຮຽບຮຽງ ແລະຈັດໜ້າໂດຍ: ນາງ ກອງມະນີ ຄຳຜາຍ

ຜູ້ແຕ້ມ:

ຜູ້ຮຽບຮຽງ:

ເຈົ້າຂອງ: ພະແນກສຶກສາແຂວງໄຊຍະບູລີ ແລະ
ສູນອົບຮົມຮ່ວມພັດທະນາ


PDF created with pdfFactory Pro trial version www.pdffactory.com

## ຄຳນຳ

ປຶ້ມພູມປັນຍາທ້ອງຖິ່ນເຫລັ້ມນີ້ໄດ້ມາຈາກການຂຽນຂອງຊາວບ້ານ ແລະ ອາສາສະໝັກເຊິ່ງໄດ້ຮັບການຮຽບຮຽງເບື້ອງຕົ້ນຈາກອຳນວຍການສູນອົບຮົມຮ່ວມພັດທະນາ ແລະ ກະຊວງສຶກສາທິການ.

ປຶ້ມເຫລັ້ມນ້ອຍໆນີ້ໄດ້ບັນຈຸເອົາເນື້ອໃນທີ່ເວົ້າເຖິງຫົວຂໍ້ໃດໜຶ່ງໂດຍມີຫລາຍໆກິດຈະກຳທີ່ເປັນການທົດລອງເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາ ແລະ ສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍມາສອນຫ້ອງ ປ1, ປ2 ແລະ ບົດທີ່ຍາກກໍສອນຫ້ອງທີ່ໃຫຍ່ຂຶ້ນໄປ.

ຄະນະຈັດທຳຄິດວ່າຍັງມີຫລາຍບັນຫາທີ່ຍັງບໍ່ທັນພຽງພໍ ແລະ ຂາດໄປຫວັງວ່າຄົງຈະໄດ້ຮັບຄຳຕຳນິຕິຊົມຈາກທຸກໆທ່ານ ພວກເຮົາພ້ອມທີ່ຈະປັບປຸງນຕາມຄວາມເໝາະສົມ.

ຄະນະຈັດທຳ

**ເຊີ້ງ**: ປູກຜັກບົ່ວ

ໂຮ..........................ຮິວ...

ມາພວກເຮົາມາ ມາພວກເຮົາມາ
ພ້ອມພາກັນມາ ປູກຜັກບົ່ວໃຫຍ່
ປູກຜັກບົ່ວໄວ້ ໄດ້ກິນໄດ້ຂາຍ
ປູກໃຫ້ຫຼາຍໆ ກາຍເປັນສິນຄ້າ
ຕື່ນເຊົ້າລຸກມາ ຂຸດດິນກຽມໄວ້
ໃຫ້ເອົາໃຈໃສ່ ທຸບດິນມຸ່ນດີ
ຈາກນັ້ນກໍ່ມີ ຫົວເຊື້ອແນວພັນ
ຈາກນັ້ນພ້ອມກັນ ໃສ່ຝຸ່ນຫົດນ້ຳ

**ເພງ**: ປູກຜັກບົ່ວ

ຫົວຜັກບົ່ວໃຫຍ່ ສີແດງງາມໆ
ໃຜໆກໍ່ຖາມ ຜັກບົວງາມຫົວໃຫຍ່
ໃຫ້ເຈົ້າໄປຊື້ ມາກິນບຳລຸງຮ່າງກາຍ
ໜ້າຕາສົດໃສ ຍ້ອນໄດ້ຮັບວິຕາມິນ

PDF created with pdfFactory Pro trial version www.pdffactory.com

**ກາບ**: ຜັກບົ່ວ

ຫົວຜັກບົ່ວ ເປັນສີຂາວແດງ
ເອົາໃສ່ແກງ ໃສ່ຂົ້ວກໍໄດ້
ຫົວບັກໃຫຍ່ ປູກໄດ້ຂາຍດີ
ບໍ່ເຄີຍມີ ພະຍາດບັງບຽດ
ປູກໄດ້ແລ້ວ ຄອງຖ້າເກັບຜົນ
ປູກບໍ່ດົນ ສອງເດືອນເກັບໄດ້
ເກັບໄປໃຫ້ ພວກຂາປະຈໍາ
ເກັບເງິນນໍາ ທ້ອນໄວ້ທ້ອນໄວ້
ຂາຍໄດ້ຫຼາຍ ຝາກທະນາຄານ
ສົ່ງລູກຫຼານ ໄປຮຽນໄປຮ່ໍາ
ທຸກເຊົ້າຄ່ໍາ ຈິດໃຈສະບາຍ
ເພາະເຮົາຫາຍ ຈາກຄວາມທຸກຍາກ
ບໍ່ລໍາບາກ ຄືເກົ່າຄືຫຼັງ
ມີແນວຟັງ ແນວເບິ່ງຕ່າງໆ
ບໍ່ໄດ້ຍ່າງ ໃຫ້ເສຍເວລາ
ຍາມໄປມາ ກໍມີລົດຂີ່

**<u>ຄວາມເປັນມາ</u>**

ຢູ່ບ້ານເຮົານິຍົມປູກຜັກບົ່ວຫົວແດງ ຫຼື ຜັກບົ່ວເລີ້ງພັນພື້ນເມືອງລາວເປັນພືດທີ່ບໍ່ເລືອກດິນລົງທຶນໜ້ອຍສະເພາະຊື້ແນວ, ເປັນຜັກທີ່ຕະຫຼາດຕ້ອງການຫຼາຍຂາດຍາມໃດລາຄາທ້ອງຕະຫຼາດຖືກກໍປະໄວ້ໃຫ້ມັນແກ່ຈຶ່ງຫຼົກໄປຂາຍ

PDF created with pdfFactory Pro trial version www.pdffactory.com

## <u>ອຸປະກອນ</u>

- ຊວ້ານ ຫຼື ສຽມສິບເປັດສໍາລັບເສຍຫຍ້າໃຫ້ແປນ



- ແນວພັນ (ຫົວຜັກບົ່ວ)



## ຫຼັກການທີ່ສໍາຄັນ

- ລະດູແລ້ງຕ້ອງປູກໃສ່ໜານຫຼຸບ
- ລະດູຝົນຕ້ອງປູກໃສ່ຮາງເທິງດິນ
- ໝັ່ນຈົ້ມດິນໃສ່ຝຸ່ນຄອກທຸກໆອາທິດ
- ບໍ່ຄວນໃສ່ຂີ້ໄກ່ລາດ, ຜັກຈະເປັຫນເພ້ຍແລ້ວຕາຍໃຫ້ໃຊ້ຂີ້ໝູ, ຂີ້ໄກ່ງວງ, ຂີ້ເປັດ

PDF created with pdfFactory Pro trial version www.pdffactory.com

- ຫົດນ້ຳໃຫ້ປຽກໆປະໄວ້ ແລະ ຫົດນ້ຳເປັນປະຈຳ



- ຫຼິກຫຍ້າອອກຈາກໜານເປັນປະຈຳພ້ອມທັງຈີ້ມດິນອ້ອມຂຸມ 2 ອາ
ທິດຕໍ່ຄັ້ງຖ້າເຫັນວ່າບ່ອນໃດບໍ່ງາມກໍເພີ່ມຝຸ່ນ



- ຈົກສຳລັບຂຸດດິນ



- ໄມ້ຄ້ອນໄວ້ທັບດິນໃຫ້ມຸ່ນ



PDF created with pdfFactory Pro trial version www.pdffactory.com

## ວິທີການປູກ

- ເລືອກເອົາຫົວແຂງແຮງໃຫຍ່ດີ (ຫຼືກອອກຈາກໜານແລ້ວປູກພ້ອມ, ບໍ່ຄວນປະໄວ້ໃຫ້ມັນຫ່ຽວແຫ້ງ ຫຼື ເນົ່າ)



- ຂຸດດິນໄຖເປັນໜານກວາງ 1 ແມັດ ຍາວບໍ່ມີກຳນົດທັບດິນໄຫມຸ່ນລະອຽດດີ, ແປງໜານໂດຍໃຫ້ມີຄັນຄູທາງຂ້າງ



- ເອົາເຟືອງຫຼືຂີ້ແກບປູໜານທີ່ຈະປູກ



- ເອົາມືຂວັດເປັນຂຸມ, ເອົາຝຸ່ນຄອກຮອງຂຸມແລ້ວເອົາຜັກບົ່ວລົງພ້ອມເອົາມືບີບດິນໃຫ້ແໜ້ນ



PDF created with pdfFactory Pro trial version www.pdffactory.com